**ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ**

628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.

ໂທ-ແຟັກ: +856 21 418 062-6

# ບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022
# ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ("ບໍລິສັດ")

**ວັນ, ເວລາ ແລະ ສະຖານທີ່ :**

ກອງປະຊຸມໄດ້ຈັດຂຶ້ນໃນວັນທີ 25 ເມສາ 2022 ເວລາ 09:30 ໂມງ ທີ່ ຫ້ອງ Pearl Room ຊັ້ນ4, ຄອນເວັນຊັນ ເຊັນເຕີ້, ໂຮງແຮມ ແລນມາກ ແມ່ຂອງ ລີເວີໄຊທ໌, ບ້ານ ທາດຂາວ ເມືອງ ສີສັດຕະນາກ ນະຄອນຫຼວງວຽງຈັນ

**ກ່ອນທີ່ຈະເປີດກອງປະຊຸມ:**

ທ່ານ ທີຣະ ຊຸຕິວະລາພອນ ປະທານສະພາບໍລິຫານຂອງບໍລິສັດ ໄດ້ແຈ້ງໃຫ້ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີຊາບວ່າ, ເນື່ອງຈາກສະມາຊິກສະພາບໍລິຫານຂອງບໍລິສັດຫຼາຍທ່ານທີ່ຢູ່ຕ່າງປະເທດບໍ່ສາມາດເຂົ້າຮ່ວມກອງປະຊຸມດ້ວຍຕົນເອງໄດ້ ແຕ່ຈະເຂົ້າຮ່ວມກອງປະຊຸມໂດຍຜ່ານວີດີໂອຄອນເຟີເລັນ

ປະທານສະພາບໍລິຫານ ເປັນປະທານກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2022, ປະທານກອງປະຊຸມໄດ້ກ່າວຕ້ອນຮັບບັນດາທ່ານຜູ້ຖືຮຸ້ນ ແລະ ຜູ້ເຂົ້າຮ່ວມທັງໝົດພ້ອມທັງແຈ້ງໃຫ້ຊາບວ່າ ມີຜູ້ເຂົ້າຮ່ວມປະຊຸມ ທັງໝົດ 24 ທ່ານ, 333,916,600 ຮຸ້ນ ຫຼື ເທົ່າກັບ 83.48% ຂອງຈຳນວນຮຸ້ນທັງໝົດ ຖືວ່າຄົບອົງປະຊຸມຕາມລະບຽບກົດໝາຍ ແລະ ລະບຽບຂອງບໍລິສັດ, ປະທານໄດ້ເປີດກອງປະຊຸມຢ່າງເປັນທາງການໃນເວລາ 10:02 ໂມງ ແລະ ມອບໝາຍໃຫ້ພິທີກອນແນະນຳສະມາຊິກສະພາບໍລິຫານລວມທັງເຈົ້າໜ້າທີ່ ທີ່ກ່ຽວຂ້ອງເຂົ້າຮ່ວມປະຊຸມດັ່ງຕໍ່ໄປນີ້:

**ຜູ້ເຂົ້າຮ່ວມ:**

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມກອງປະຊຸມ:**

| | | | | |
|---|---|---|---|---|
| 1. | ທ່ານ | ທີຣະ | ຊຸຕິວະລາພອນ | ປະທານສະພາບໍລິຫານ |
| 2. | ທ່ານ | ວິຊຽນ | ລັກນາທິນ | ຮອງປະທານສະພາບໍລິຫານ |
| 3. | ທ່ານ | ມານົບ | ຕຣີລິດວິໄລ | ສະມາຊິກສະພາບໍລິຫານ/ຜູ້ອຳນວຍການ |
| 4. | ທ່ານ | ໂກວິດ | ເກີດສິລິລັກ | ສະມາຊິກສະພາບໍລິຫານ |
| 5. | ທ່ານ | ວັນຄຳ | ວໍລະວົງ | ສະມາຊິກສະພາບໍລິຫານອິດສະຫຼະ |
| 6. | ທ່ານ | ວິນຍູ | ຈີລະປະພາການ | ສະມາຊິກສະພາບໍລິຫານອິດສະຫຼະ |

- **ສະມາຊິກສະພາບໍລິຫານຜູ້ທີ່ເຂົ້າຮ່ວມປະຊຸມຜ່ານ ວີດີໂອ ຄອນເຟີເລັນ:**

| | | | | |
|---|---|---|---|---|
| 1. | ທ່ານ | ຊາຄຣິດ | ນັກສອນ | ປະທານສະພາບໍລິຫານ |
| 2. | ທ່ານ | ໄວຣຸ່ງ | ມີນາກຸນ | ສະມາຊິກສະພາບໍລິຫານ |
| 3. | ທ່ານ | ທີຣະເມດ | ວຸດທິພັດພິບູນ | ສະມາຊິກສະພາບໍລິຫານອິດສະຫຼະ |

- **ຜູ້ບໍລິຫານທີ່ເຂົ້າຮ່ວມກອງປະຊຸມ :**
  1. ທ່ານນາງ ສຸລິພອນ ສຸວັນໄຊລົບ ( ຮັກສາການຮອງຜູ້ອຳນວຍການດ້ານການເງິນ )
  2. ທ່ານນາງ ເອື້ອມພອນ ຈຸງມສີພົງ ຜູ້ຈັດການຝ່າຍຄົ້ນຄວ້າ ແລະ ພັດທະນາທຸລະກິດ

- **ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ:**
  1. ທ່ານນາງ ພູວັນ ຈັນທະລັງສີ — ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
  2. ທ່ານນາງ ມະລີ ໄຊຍະວົງ — ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
  3. ທ່ານນາງ ນາງ ຕຸກຕິ່ນ ສີວັນທອງ — ຜູ້ຖືຮຸ້ນລາຍຍ່ອຍຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະກຳມະການກວດກາການດຳເນີນກອງປະຊຸມ ແລະ ລົງຄະແນນສຽງ
  4. ທ່ານນາງ ວັນນະພອນ ສຸນັນທາ — ຜູ້ຕາງໜ້າຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
  5. ທ່ານນາງ ອານຸວັນ ທຳມະວົງ — ຜູ້ຕາງໜ້າຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໃນນາມຄະນະຕິດຕາມ ແລະປະເມີນການດຳເນີນກອງປະຊຸມ
  6. ທ່ານ ອັດສະວິນ ຂັນທະວົງ — ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ
  7. ທ່ານ ທີລະພົງ ຍອງປະໂຄນ — ຜູ້ຖືຮຸ້ນລາຍຍ່ອຍຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ໃນນາມຄະນະຕິດຕາມ ແລະ ປະເມີນການດຳເນີນກອງປະຊຸມ

ຫລັງຈາກນັ້ນ, ພິທີກອນໄດ້ລາຍງານແຕ່ລະວາລະຂອງກອງປະຊຸມສຳລັບມື້ນັ້ນແລະໄດ້ອະທິບາຍວິທີການລົງຄະແນນສຽງໃຫ້ຜູ້ເຂົ້າຮ່ວມກອງປະຊຸມດັ່ງຕໍ່ໄປນີ້:

**1. ວາລະ:**

1. ພິຈາລະນາຮັບຮອງລາຍງານການປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021
2. ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022
3. ພິຈາລະນາຮັບຮອງໃບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022

4. ພິຈາລະນາອະນຸມັດການຈັດສັນກຳໄລສຸດທິ ປະຈຳປີ 2022 ແລະ ງົດຈ່າຍເງິນປັນຜົນ
5. ພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈຳປີ 2023
6. ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ
7. ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ(ສະມາຊິກສະພາບໍລິຫານ) ຂອງບໍລິສັດ ປະຈຳປີ 2023
8. ພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2023
9. ເລື່ອງອື່ນໆ (ຖ້າມີ)

## 2. ວິທີລົງຄະແນນສຽງ

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ
- ໃນການລົງຄະແນນສຽງໃນແຕ່ລະວາລະ ປະທານຈະສອບຖາມຜູ້ຖືຮຸ້ນວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ແມ່ນໃຫ້ລົງຄະແນນສຽງໃນບັດລົງຄະແນນສຽງໃນວາລະນັ້ນໆ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າຫ້ອງປະຊຸມ ພ້ອມທັງຍົກບັດດັ່ງກ່າວຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນເພື່ອໄປກວດນັບຄະແນນສຽງ ແລະ ສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ
- ສຳລັບຜູ້ຖືຮຸ້ນທີ່ມອບສິດໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີໄດ້ລະບຸໄວ້ໃນໃບມອບສິດ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສິດດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງໃນບັດລົງຄະແນນໃນກອງປະຊຸມ

## 3. ການນັບຄະແນນສຽງ

- ການນັບຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງທີ່ບໍ່ເຫັນດີຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນຕາມທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າໃນວາລະທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ ໂດຍນຳມາຫັກອອກຈາກຈຳນວນຮຸ້ນທັງໝົດຂອງຜູ້ເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ
- ປະທານຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະໃຫ້ກອງປະຊຸມໄດ້ຮັບຊາບ ຫຼັງຈາກລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ. ໃນກໍລະນີຜູ້ຖືຮຸ້ນໄດ້ສົ່ງບັດລົງຄະແນນສຽງບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ໄດ້ນຳເອົາຄະແນນສຽງດັ່ງກ່າວ ມານັບຄະແນນສຽງຕື່ມອີກ

ປະທານກອງປະຊຸມສືບຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2022 ໂດຍລາຍງານແຕ່ລະວາລະດັ່ງຕໍ່ໄປນີ້:

**ວາລະທີ 1 ຮັບຮອງ ລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021**

ປະທານກອງປະຊຸມ ໄດ້ສະເໜີໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮອງລາຍງານກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີ 2021 ທີ່ປະຊຸມເມື່ອວັນທີ 28 ເມສາ 2022 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:**

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເຊິ່ງໄດ້ປະຊຸມໃນວັນ 28 ເມສາ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມໄດ້ພິຈາລະນາ ແລະ ຮັບຮອງເອົາລາຍງານການປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ເຊິ່ງຈັດຂຶ້ນໃນວັນທີ 28 ເມສາ 2022 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 2 ພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022 ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການ ເປັນຜູ້ນຳສະເໜີບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022 ເຊິ່ງມີລາຍລະອຽດດັ່ງນີ້:

- **ຜົນການດຳເນີນງານທີ່ສຳຄັນຂອງປີ 2022**

  ບໍລິສັດໄດ້ ເປີດບໍລິການໃຫ່ມສິນເຊື່ອ "ຜ່ອນຄຳ" (ເປີດຕົວ ວັນທີ 11 ພະຈິກ 2022)

- **ຈຳນວນຍອດສິນເຊື່ອໃຫ່ມ ປີ 2022 ທຽບໃສ່ ປີ 2021**

| | 2021 | 2022 | ຜົນຕ່າງ |
|---|---|---|---|
| ຈຳນວນສັນຍາ | 5.441 | 4.933 | - 9,3% |
| ຈຳນວນເງິນໃຫ້ສິນເຊື່ອ (ລ້ານກີບ) | 70.332 | 83.698 | +19,0% |

- **ປຽບທຽບການອະນຸມັດສິນເຊື່ອໃຫ່ມຂອງບໍລິສັດໃນໄລຍະປີ 2021 ຫາ 2022.**

| ລາຍການ | ປີ 2021 | ປີ 2022 | ເພີ່ມຂຶ້ນ | ອັດຕາສ່ວນຮ້ອຍ |
|---|---|---|---|---|
| ສິນເຊື່ອລົດຈັກ ແລະ ອື່ນໆ (ສັນຍາ) | 70.332 | 81.228 | +10.896 | +15,5 |
| ສິນເຊື່ອຜ່ອນຄຳ | - | 2.470 | +2.469 | +100,0 |
| **ລວມ** | **70.332** | **83.698** | **+13.366** | **+19,0** |

- **ຜົນການດຳເນີນງານຂອງປີ 2022 ປຽບທຽບກັບ ປີ 2021**

| ລາຍການ | 2021 (ລ້ານກີບ) | 2022 (ລ້ານກີບ) | ຜົນຕ່າງ |
|---|---|---|---|
| ກຳໄລສຸດທິ (ກ່ອນພາສີ) | 8.891,0 | 3.689,5 | - 58,5% |
| ພາສີນິຕິບຸກຄົນ | 1.299,4 | 2.641,9 | + 103,3% |
| ກຳໄລສຸດທິ ( ຫຼັງພາສີ ) | 7.591,6 | 1.047,6 | - 86,2% |

**ກຳໄລຫຼຸດລົງຂອງປີ 2022 ເກີດຈາກການຂາດທຶນຈາກອັດຕາແລກປ່ຽນ**

| ລາຍການ | 2022 (ລ້ານກີບ) |
|---|---|
| ກຳໄລສຸດທິ ( ຫຼັງພາສີ ) | 1.047,6 |
| ຂາດທຶນຈາກອັດຕາແລກປ່ຽນ | 9.690,5 |
| | 10.738,1 |

**ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:**

ທ່ານ ມົນຕີ ອາລຸນ ຜູ້ຕ່າງໜ້າຜູ້ຖືຮຸ້ນ ມີຜູ້ມອບສິດມີຈຳນວນຮຸ້ນທັງໝົດ 59.865.440 ຮຸ້ນ ຂໍສອບຖາມປະທານ 4 ຄຳຖາມ ຊ່ວຍຊີ້ແຈ້ງໃຫ້ຄວາມໝັ້ນໃຈໃຫ້ແກ່ນັກລົງທຶນຜູ້ຖືຮຸ້ນ ທິດທາງໃນອານາຄົດໃນການດຳເນີນທຸລະກິດເຮົາ ປ່ຽນແປງໃນຮູບແບບໃດ ເປົ້າໝາຍຍຸດທະສາດ ແລະ ແຫ່ງເງິນທຶນ ດັ່ງນີ້:

1. ມາດຕະການໃນການບໍລິຫານຈັດການໜີ້ສູນ?
2. ທຸລະກິດສິນເຊື່ອຜ່ອນຄຳ ຍັງບໍ່ມີການກຳນົດເປົ້າໝາຍສຳຫຼັບການດຳເນີນການໃນປີ 2023
3. ທິດທາງໃນອະນາຄົດການດຳເນີນທຸລະກິດຈະປ່ຽນແປງໄປໃນຮູບແບບໃດ? ເປົ້າໝາຍຍຸດທະສາດເປັນແນວໃດ?
4. ແຫ່ງເງິນທຶນທີ່ຕ້ອງໃຊ້ໃນແຜນງານປີ 2023 ເປັນແນວໃດ ບໍ່ມີກາລະບຸລາຍລະອຽດເອົາໃວ້ ຊຶ່ງສະພາບຄ່ອງຂອງບໍລິສັດຕາມງົບປີ 2022 ລົດລົງປະມານ 48.8 ສ່ວນຮ້ອຍ ເມື່ອທຽບກັບປີ 2021

ປະທານກອງປະຊຸມ ຊີ້ແຈ້ງ ບໍລິສັດມຸ່ງເນັ້ນໄປທາງການປ່ອຍສິນເຊື່ອຄຳ ມີເປົ້າໝາຍທີ່ກຳໜົດໃວ້ໃຊ້ພາຍໃນຢູ່ແລ້ວ ຕັ້ງເປົ້າໝາຍໄວ້ແລ້ວ 10,000 ສັນຍາໃນປີນີ້ ເຊິ່ງປັດຈຸບັນຈາກຂໍ້ມູນທີ່ປ່ອຍໄປແລ້ວ 1,200 ກວ່າສັນຍາ ຄ່າສະເລ່ຍຢູ່ທີ່ 1ບາດ/1ຄົນ/1ສັນຍາ, ໜີ້ສູນກໍຍັງເຝົ້າສັງເກດຢູ່ສະເໝີ. ເນື່ອງຈາກວ່າຄຳເປັນຊັບສິນທີ່ຫຼົບລີ້ໄດ້ງ່າຍ ເອົາໄປຂາຍກໍງ່າຍ ຊຶ່ງມີສະພາບຄ່ອງທີ່ສູງກວ່າລົດຈັກ.

ໃນສ່ວນຂອງແຫ່ງເງິນທຶນ ປັດຈຸບັນບໍລິສັດ ມີແຜນຈະມີການຄືນໜີ້ 1,6 ລ້ານ ໂດລາສະຫະລັດເປັນໜີ້ທີ່ກະທົບກັບທາງດ້ານບັນຊີໃນປີ 2021 ເລື່ອງຂາດທຶນອັດຕາແລກປ່ຽນ, ໂດຍບໍລິສັດ ມີແຜນທີ່ຈະໄປກູ້ເງິນຈາກທະນາຄານ BFL ດ້ວຍວົງເງິນປະມານ 4,5 ລ້ານ ໂດລາສະຫະລັດ ໂດຍເງື່ອນໄຂຂອງ BFL ບໍ່ຕ້ອງໃຊ້ເງິນສົດເປັນຫຼັກຄ້ຳປະກັນ 100% ຄືກັບທະນາຄານທະນາຄານ EXIM Bank ເຊິ່ງຈະເຮັດໃຫ້ບໍລິສັດໄດ້ປຽບຫຼາຍຂຶ້ນເລື່ອງຂອງເງິນສົດໃນບໍລິສັດ.

ທ່ານ ມານົບ ຕຣີລິດວິໄລ ຊີ້ແຈ້ງ ໃນສ່ວນຂອງການຄວບຄຸມຄຸນະພາບລູກໜີ້ ຄືທາງບໍລິສັດມີປະສົບການໃນສ່ວນຂອງການດຳເນີນທຸລະກິດຜ່ອນລົດຈັກມາຫຼາຍພໍສົມຄວນ, ຊຶ່ງເປັນທຸລະກິດສິນເຊື່ອລາຍຍ່ອຍ ໄດ້ມີການພັດທະນາຕໍ່ເນື່ອງ ໂດຍສະເພາະໃນເລື່ອງຂອງຂໍ້ມູນລູກຄ້າມາເຮັດການວິເຄາະ, ໃຊ້ຂໍ້ມູນຈາກສະຖິຕິຜ່ານມາຂອງລູກຄ້າໃນອະດີດ ວ່າລູກຄ້າຄຸນະສົມບັດເປັນແນວໃດ ບໍລິສັດຄວນຈະປ່ອຍໃຫ້ສິນເຊື່ອຫຼາຍກວ່າໃນກຸ່ມລູກຄ້າໃດ ແລະ ລູກຄ້າກຸ່ມໃດທີ່ມີຄວາມສ່ຽງສູງ ເພື່ອທົບທວນ ແລະ ກຳນົດ Credit Criteria ໃໝ່ໆ ຕະຫຼອດເວລາ ຊຶ່ງເປັນມາດຕະການດ່ານທຳອິດໃນການປ້ອງກັນລູກຄ້າທີ່ມີຄຸນສົມບັດທີ່ໜີ້ສູນເຂົ້າມາໃນບໍລິສັດ. ແຕ່ທີ່ສຳຄັນອີກສ່ວນໜຶ່ງກໍຄື ໃນເລື່ອງຂອງການຕິດຕາມໜີ້, ບໍລິສັດມີການພັດທະນາທີມຕິດຕາມໜີ້ເພີ່ມຂື້ນ, ມີການພັດທະນາລະບົບ Debt Management System ເປັນລະບົບທີ່ສາມາດເກັບຂໍ້ມູນຕິດຕາມລູກໜີ້ໄດ້ໃນແຕ່ລະບຸກຄົນ ເພື່ອໃຫ້ເຈົ້າໜ້າທີ່ຕິດຕາມໜີ້ສາມາດທີ່ຈະໄປຫາລູກຄ້າໄດ້, ໂດຍລະບົບສາມາດກຳເກັບທີ່ຢູ່ຂອງລູກຄ້າ, ສະຖານທີ່ເຮັດວຽກຂອງລູກຄ້າ ເຮັດໃຫ້ການຕິດຕາມໜີ້ຂອງບໍລິສັດມີປະສິດທິພາບສູງຂື້ນ ນອກຈາກນີ້ບໍລິສັດມີມາດຕະການຕິດຕາມໜີ້ ແລະ ຂັ້ນຕອນປະຕິບັດໃນການດຳເນີນຄະດີທາງກົດໝາຍ ບໍລິສັດມີປະສົບການຫຼາຍພໍສົມຄວນ ຈຶ່ງໝັ້ນໃຈວ່າສາມາດຄວບຄຸມຄຸນະພາບລູກໜີ້ໃນລະດັບໜຶ່ງ

ທ່ານ ມົນຕີ ອາລຸນ ສະເໜີເພີ່ມເຕີມ ເນື່ອງຈາກວ່າ ທຸລະກິດການຜ່ອນຄຳ ຄ່ອຍຂ້າງເປັນທຸລະກິດທີ່ໃໝ່ ( Green Field ) ເນື່ອງຈາກທາງ ບໍລິສັດເຕີບໂຕຈາກສິນເຊື່ອຜ່ອນລົດຈັກມາຕະຫຼອດ ແລະ ຈາກນະໂຍບາຍຂໍສະພາບໍລິຫານໃນໜ້າທີ 36 ຂອງ ບົດສະຫຼຸບການດຳເນີນທຸລະກິດແມ່ນເນັ້ນການຂະຫຍາຍທຸລະກິດການສິນເຊື່ອເຊົ່າຊື້ຜ່ອນຄຳເປັນທຸລະກິດຫຼັກ ເຊິງເປັນທຸລະກິດໃໝ່ ຈຶ່ງສະເໜີໃຫ້ທ່ານປະຊີ້ແຈ້ງລາຍລະອຽດກ່ຽວກັບ ການດຳເນີນທຸລະກິດ “ສິນເຊື່ອຜ່ອນຄຳ” ເປົ້າໝາຍຈຳນວນ, ຍຸດທະຍາສາດການຂັບເຄື່ອນ, ການບໍລິການຈັດການເລື່ອງຄວາມສ່ຽງ ເປັນຕົ້ນ ໃນການປະຊຸມຄັ້ງຕໍ່ໄປ

**ປະທານກອງປະຊຸມ** ຊີ້ແຈ້ງວ່າໃນການສະເໜີແຜນງານຄັ້ງຕໍ່ໄປ ທາງບໍລິສັດຈະຊີ້ແຈ້ງຊັດເຈນກ່ຽວກັບ ການດຳເນີນທຸລະກິດສິນເຊື່ອຜ່ອນຄຳ ໂດຍຈະສະແດງທັງ Marketing Plan ແລະ Sale Plan ເປັນຕົ້ນ.

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມພິຈາລະນາ ແລະ ຮັບຮອງເອົາບົດສະຫຼຸບລາຍງານກ່ຽວກັບການດຳເນີນການຂອງບໍລິສັດ ແລະ ລາຍງານປະຈຳປີ 2022 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 3 ພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022 ໂດຍວາລະນີ້ ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານນາງ ສຸລິພອນ ສຸວັນໄຊລົບ ( ຮັກສາການຮອງຜູ້ອຳນວຍການດ້ານການເງິນ ) ເປັນຜູ້ນຳສະເໜີກ່ຽວກັບງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກຳໄລຂາດທຶນ) ປະຈຳປີ 2022 ເຊິ່ງມີລາຍລະອຽດດັ່ງນີ້:

- ສະຖານະທາງການເງິນ ວັນທີ 31 ທັນວາ 2022
  - ຊັບສິນລວມ 109.064,0 ລ້ານກີບ
  - ໜີ້ສິນລວມ 38.141,7 ລ້ານກີບ
  - ສ່ວນຂອງຜູ້ຖືຮຸ້ນ 70.919,3 ລ້ານກີບ
  - ລາຍໄດ້ລວມ 33.725,4 ລ້ານກີບ
  - ລາຍຈ່າຍລວມ 30.035,9 ລ້ານກີບ
  - ກຳໄລສຸດທິ 1.047,6 ລ້ານກີບ
- **ງົບສະແດງສະຖານະທາງການເງິນຂອງບໍລິສັດ ບັນຊີກຳໄລຂາດທຶນ ປະຈຳປີ 2022**

| Financial Ratio ທີ່ສຳຄັນ | 2021 | 2022 | Different |
|---|---|---|---|
| Return on Asset | 7.8% | 1.0% | -6.8% |
| Return on Equity | 10.5% | 1.5% | -9.0% |
| D/E (Times) | 0.3 | 0.5 | +0.2 times |
| Net profit margin | 28.0% | 3.1% | -24.9% |

**ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:**

ທ່ານ ມົນຕີ ອາລຸນ ຜູ້ຕາງໜ້າຜູ້ຖືຮຸ້ນ ມີຜູ້ມອບສິດມີຈຳນວນຮຸ້ນທັງໝົດ 59.865.440 ຮຸ້ນ ຂໍສອບຖາມປະທານ

- ໃນສ່ວນຂອງງົບການເງິນມີຂໍ້ສັງເກດເຫັນໄດ້ວ່າສະພາບຄ່ອງທາງການເງິນຂອງບໍລິສັດ ເຫັນໄດ້ວ່າ ໃນປີ 2022 ຖືດຖອຍຈາກປີ 2021 ຫຼາຍ ເບິ່ງຈາກ Current ratio ອັດຕາສ່ວນທຶນໝູນວຽນຕໍ່ໜີ້ສິນໝູນວຽນ ໃນປີ 2021 ຢູ່ທີ່ປະມານ 9,2 ເທົ່າ ຕົກມາປີ 2022 ເຫຼືອພຽງ 2,2 ເທົ່າ ເຫັນວ່າລາຍການທຽບເທົ່າເງິນສົດຫຼຸດລົງໄປປະມານ 48,8% ເພາະທາງສະພາບໍລິຫານນຳສະເໜີເລື່ອງທຸລະກິດຜ່ອນຄຳ ເຊິ່ງມັນຕ້ອງຫາແຫ່ງເງິນທຶນກ້ອນໃຫຍ່ພໍສົມຄວນ ທີ່ຈະໃຊ້ໝູນວຽນໃນທຸລະກິດ
- ມີຂໍ້ສັງເກດກ່ຽວກັບຄຸນນະພາບໜີ້ ໃນສ່ວນຂອງລູກໜີ້ສິນເຊື່ອຜ່ອນຊຳລະ ຕາມໝາຍເຫດຂອງງົບ 4 ໜ້າ 17 ພົບວ່າລູກໜີ້ທີ່ເກີນກວ່າ 12 ເດືອນ ປີ 2022 ເພີ່ມຈາກປີ 2021 ປະມານ 47,2% ໃນຂະນະທີ່ສັນຍາສິນເຊື່ອໃໝ່ຫຼຸດລົງ
- ໃນງົບກຳໄລຂາດທຶນຈາກໝາຍເຫດປະກອບງົບຂໍ້ 19 ໜ້າທີ 24 ລາຍຈ່າຍອື່ນໆ ຖ້າປຽບທຽບລະຫວ່າງປີ ມັນເພີ່ມຂຶ້ນບໍ່ຫຼາຍ ຈາກປີ 2021, ມີເງິນໝູນວຽນ 3,600 ກວ່າລ້ານກີບ ເພີ່ມເປັນ 15,000 ກວ່າລ້ານກີບ ພົບວ່າລາຍການທີ່ເພີ່ມຂື້ນເກືອບທັງໝົດມາກຈາກລາຍຈ່າຍອື່ນໆເກືອບທັງໝົດ ເຊິ່ງໃນເອກະສານຂອງການປະກອບງົບນີ້ ບໍ່ຮູ້ວ່າສາມາດຊີ້ແຈ້ງໄດ້ບໍວ່າເພີ່ມຂຶ້ນເກືອບທັງໝົດນີ້ມັນຄືລາຍຈ່າຍຫຍັງ?

ປະທານກອງປະຊຸມ ເຂົ້າໃຈວ່າຜູ້ຖືຮຸ້ນມີຄວາມກັງວົນກ່ຽວກັບເງິນສົດຫຼຸດລົງ ຂໍອະທິບາຍເພີ່ມເຕີມກ່ຽວກັບການຂໍກູ້ຢືມເງິນຈາກທະນາຄານ BFL ນັ້ນ ໃນສ່ວນຂອງການຄ້ຳປະກັນ ທາງທະນາຄານ BFL ບໍ່ຈຳເປັນຕ້ອງໃຊ້ເງິນສົດເປັນຫຼັກປະກັນ ໂດຍຈະໃຊ້ລູກໜີ້ຂອງບໍລິສັດ (Portfolio) ເປັນຫຼັກປະກັນ ມີວົງເງິນ 4,5 ລ້ານ ໂດລາສະຫະລັດ ດັ່ງນັ້ນ ຈຶ່ງບໍ່ຕ້ອງກັງວົນກ່ຽວກັບກະແສເງິນສົດ ເພາະບໍລິສັດສາມາດໃຊ້ລູກໜີ້ຂອງບໍລິສັດ (Portfolio) ເປັນທຶນໝູນວຽນ

ທ່ານນາງ ສຸລິພອນ ສຸວັນໄຊລົບ ( ຮັກສາການຮອງຜູ້ອຳນວຍການດ້ານການເງິນ ) ຊີ້ແຈ້ງກ່ຽວກັບລາຍຈ່າຍອື່ນໆ ທີ່ສອບຖາມນັ້ນ ເນື່ອງຈາກຂໍ້ມູນທີ່ນຳມາມີລາຍລະອຽດບໍ່ພຽງພໍ ຈຶ່ງຂໍໄປສຶກສາຂໍ້ມູນເພີ່ມເຕີມ ແລະ ຈະແຈ້ງຂໍ້ມູນໃຫ້ຜູ້ຖືຮຸ້ນໃນພາຍຫຼັງ

ທ່ານ ມົນຕີ ອາລຸນ ຜູ້ຕາງໜ້າຜູ້ຖືຮຸ້ນ ຂໍສອບຖາມເພີ່ມເຕີມ ເນື່ອງຈາກເງິນທຶນທີ່ຈະກູ້ 4,5 ລ້ານໂດລະສະຫາຣັດ ເປົ້າໝາຍຈະມາໃຊ້ໃນການປ່ອຍສິນເຊື່ອຄຳທັງໝົດເລີຍບໍ? ແລະ ທຸກິດເກົ່າແມ່ນການປ່ອຍສິນເຊື່ອລົດຈັກ ແຕ່ວ່າທາງສະພາບໍລິຫານມີແນວໂນ້ມທີ່ຈະເນັ້ນໄປທາງສິນເຊື່ອຜ່ອນຄຳ ຄວາມໝັ້ນໃຈກັບຜູ້ຖືຮຸ້ນໄດ້ແນວໃດ ວ່າຈະເປັນທຸລະກິດທີ່ຈະພາໃຫ້ເຕີບໂຕມີຜົນການດຳເນີນງານທີ່ດີ ຜົນຕອບແທນໄດ້ພຽງພໍ ແລະ ຍັງຂາດປະສົບການຫຼາຍອີກ,ແລະແຫ່ງເງິນທຶນມາຈາກການກູ້ຢືມ ຊຶ່ງຈະຕອ້ງມີພາລະດອກເບ້ຍຈ່າຍ ໂດຍໃນຊ່ວງທີ່ມີ ກຸ່ມນັກລົງທຶນເຂົ້າມາໃໝ່ນັ້ນ ທາງຜູ້ຖືຮຸ້ນຄາດຫວັງວ່າ ຈະມີແຫ່ງທຶນທີ່ຈະລະດົມທຶນເພີ່ມເຕີມເພື່ອເພີ່ມສະພາບຄ່ອງໃຫ້ທຸລະກິດກ້າວໜ້າຕໍ່ໄປໄດ້ ແຕ່ຕອນນີ້ບໍລິສັດຕ້ອງມາເພິ່ງແຫ່ງ

ເງິນທຶນຈາກສະຖາບັນການເງິນໂດຍການກູ້ຢືມນັ້ນ ອີກທັ້ງຍັງມາລົງທຶນໃນທຸລະກິດທີ່ຍັງຂາດປະສົບການອີກດ້ວຍ

ປະທານກອງປະຊຸມ ຊີ້ແຈ້ງເພີ່ມເຕີມ ດັ່ງນີ້

- ຕາມນະໂຍບາຍສະພາບໍລິຫານມີຄວາມຕັ້ງໃຈທີ່ຈະປ່ອຍຄຳເປັນສັດສ່ວນປະມານ 80% ແລະ ລົດຈັກອີກປະມານ 20% ທຸລະກິດຄຳນີ້ເປັນ Green Field ສຳຫຼັບບໍລິສັດ ແຕ່ບໍລິສັດມີຄວາມຊ່ຽວຊານເລື່ອງການສິນເຊື່ອລົດຈັກ ຊຶ່ງກໍຄືບໍລິສັດມີຄວາມຊ່ຽວຊານເລື່ອງການຜ່ອນສິນເຊື່ອລາຍຍ່ອຍຄືການ (ຂາຍເງິນ) ທາງບໍລິສັດໝັ້ນໃຈໃນທີມງານຂອງບໍລິສັດ, ບໍ່ວ່າຈະເປັນທີມທີ່ກວດສອບຂໍ້ມູນຂອງລູກຄ້າ, ທີມທີ່ຕິດຕາມໜີ້ທີ່ມີຄຸນະພາບທີ່ຜ່ານມາ, ແລະ ລູກຄ້າທີ່ຢູ່ໃນຈຸດສ່ຽງຕ້ອງກວດສອບເຄດິດຂອງລູກຄ້າ ທັ້ງນີ້ ບໍລິສັດຂໍສະເໜີທີ່ຈະເຮັດຄຳຫຼາຍກວ່າລົດຈັກ ເນື່ອງຈາກວ່າບໍລິສັດວິເຄາະເບິ່ງແລ້ວ ວ່າສິນເຊື່ອຜ່ອນລົດຈັກນັ້ນ ມີຄ່າ Dealer Commission ຊ້ຳຊ້ອນຫຼາຍ ອີກຢ່າງທາງບໍລິສັດມີຂໍ້ກັງວົນເຖິງອັດຕາການເຕີບໂຕຂອງຍອດຂາຍຂອງລົດຈັກ ໃນນະຄອນຫຼວງວຽງຈັນ ແລະ ແຂວງອື່ນໆ ເມື່ອທຽບກັບຄຳ ແມ່ນມີຄວາມສົນໃຈຫຼາຍກວ່າລົດຈັກ ທາງບໍລິສັດ ໄດ້ລົງໄປສຳຫຼວດໜ້າຮ້ານຄຳພູວົງມີຄົນ Walk in ຕໍ່ມື້ປະມານ 500-600 ຄົນ ບໍ່ວ່າລາຄາຄຳຈະຂຶ້ນ ຫຼື ລົງຄ່າສະເລ່ຍກໍ່ຈະຢູ່ປະມານນີ້ ບັນຫາໜຶ່ງທີ່ບໍລິສັດປະສົບກ່ຽວກັບລົດຈັກກະຄືລາຄາສູງຂື້ນຫຼາຍ ຈາກສະເລ່ຍປະມານ 15,000,000 ກີບຕໍ່ຄັນ ເພີ່ມເປັນ 25,000,000 ກີບຕໍ່ຄັນ ເຊິ່ງເຮັດໃຫ້ ລູກຄ້າມີກຳລັງຊື້ຫຼຸດລົງ ສ່ວນສິນເຊື່ອຜ່ອນຄຳນັ້ນ ວ່າບໍ່ລາຄາຈະຂຶ້ນ ຫຼື ລົງນັ້ນ ກໍຍັງມີຄວາມຕ້ອງການຊື້ ນັ້ນເປັນເຫດຜົນບໍລິສັດຕ້ອງຂາຍເງິນໂດຍຜູກພັນສິນຄ້າທີ່ຍັງມີແນວໂນ້ມທີ່ຈະເລີນເຕີບໂຕໃນຍອດຂາຍຕໍ່ໄປໃນອະນາຄົດ ທາງບໍລິສັດຈຶ່ງມຸ່ງເນັ້ນໄປທາງທຸລະກິດຜ່ອນຄຳ
- ດ້ານອັດຕາດອກເບ້ຍຂອງ ທະນາຄານ BFL ນັ້ນມີ ອັດຕາດອກເບ້ຍທີ່ເພີ່ມຂື້ນຈາກທະນາຄານ EXIM Bank 0,25% ແຕ່ເມື່ອທຽບກັບດອກເບ້ຍທີ່ບໍລິສັດປ່ອຍສິນເຊື່ອລົດຈັກນັ້ນ ຢູ່ທີ່ປະມານ 2,14% ຕໍ່ເດືອນ ເຊິ່ງຍັງບໍ່ໄດ້ຫັກຄ່າ Commission ທີ່ຕ້ອງຈ່າຍໃຫ້ກັບ Dealer ແລະ ຍັງບໍ່ລວມກັບຄ່າໃຊ້ຈ່າຍໃຊ້ໃນການດຳເນີນງານ ເຊິ່ງເມື່ອປຽບກັບສິນເຊື່ອຜ່ອນຄຳນັ້ນ ທາງບໍລິສັດໄດ້ໂອ້ລົມກັບ ຮ້ານ ຄຳພູວົງໄວ້ ໃຫ້ລວມຮັບຄວາມສ່ຽງກັບບໍລິສັດດ້ວຍ ໂດຍຫາກລູກຄ້າທີ່ເຮັດສັນຍາຄຳກັບບໍລິສັດຈ່າຍຄ່າງວດບໍ່ຄົບ 6 ເດືອນ ບໍລິສັດກໍ່ບໍ່ຕ້ອງຈ່າຍຄ່າ Commission ໃນສັນຍານັ້ນໆ ດັ່ງນັ້ນຈຶ່ງເຮັດໃຫ້ຮ້ານຄຳພູວົງເອງ ກໍຕ້ອງຊ່ວຍບໍລິສັດໃນການພິຈາລະນາລູກຄ້າ ເພື່ອທີ່ຈະໄດ້ຮັບຄ່າ Commission ເພື່ອໄປຮອງຮັບຄ່າໃຊ້ຈ່າຍຕ່າງໆ ຂອງຮ້ານ
- **ສ່ວນຂອງເງິນລົງທຶນນັ້ນ (Equity)** ເນື່ອງຈາກບໍລິສັດສາມາດຂໍກູ້ໂດຍທີ່ເອົາບັນຊີລູກໜີ້ (Portfolio) ມາຄ້ຳປະກັນເຮັດໃຫ້ບໍລິສັດ ບໍ່ຈຳເປັນຕ້ອງເພີ່ມທຶນ (Equity)

ທ່ານ ມົນຕີ ອາລຸນ ຜູ້ຕ່າງໜ້າຜູ້ຖືຮຸ້ນ ຂໍໃຫ້ຄວາມເຫັນເພີ່ມເຕີ່ມວ່າໃນການປະຊຸມຜູ້ຖືຮຸ້ນຄັ້ງຕໍ່ໄປ ຫາກມີວາລະກ່ຽວກັບແຜນການດຳເນີນການ ຂໍໃຫ້ບໍລິສັດຊ່ວຍບໍາລາຍລະອຽດກ່ຽວກັບແຜນການດຳເນີນງານ ແລະ ຍຸດທະສາດກ່ຽວກັບການຜ່ອນຄໍາມານໍາສະເໜີລາຍລະອຽດດ້ວຍ ເພາະຜູ້ຖືຮຸ້ນມີຄວາມກັງວົນກ່ຽວກັບການດຳເນີນທຸລະກິດນີ້.

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈື່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກໍາໄລຂາດທຶນ) ປະຈໍາປີ 2022

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມພິຈາລະນາຮັບຮອງງົບສະແດງສະຖານະການເງິນຂອງບໍລິສັດ (ງົບດຸນ, ບັນຊີລາຍຮັບ, ບັນຊີລາຍຈ່າຍ ແລະ ບັນຊີກໍາໄລຂາດທຶນ) ປະຈໍາປີ 2022 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 4 ພິຈາລະນາອະນຸມັດການຈັດສັນກໍາໄລສຸດທິ ປະຈໍາປີ 2022 ແລະ ງົດຈ່າຍເງິນປັນຜົນ**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນກໍາໄລສຸດທິ ປະຈໍາປີ 2022 ແລະ ງົດຈ່າຍເງິນປັນຜົນ ໂດຍວາລະນີ້ກອງປະຊຸມຕ້ອງລົງຄະແນນສຽງຮັບຮອງດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

ເຊິ່ງປະທານກອງປະຊຸມ ໄດ້ນໍາສະເໜີກ່ຽວກັບ ການຈັດສັນກໍາໄລສຸດທິ ປະຈໍາປີ 2022 ແລະ ງົດຈ່າຍເງິນປັນຜົນ ເຊິ່ງມີບົດສະຫຼຸບດັ່ງນີ້:

- **ສະຫຼຸບການຈັດສັນກໍາໄລສຸດທິ ປະຈໍາປີ 2022**

| ລາຍການ | ກີບ | ອັດຕາ |
|---|---|---|
| ສໍາຮອງຕາມກົດໝາຍ | 104.765.163 | 10.00 % |
| ສະສົມໄວ້ໃນກໍາໄລສະສົມ | 942.886.468 | 90.00 % |
| ກໍາໄລສຸດທິປະຈໍາປີ 2022 | 1.047.651.631 | 100.00 % |

- ເຫດຜົນທີ່ຈ່າຍເງິນປັນຜົນໃນອັດຕາຕໍ່າກວ່າ 50 ສ່ວນຮ້ອຍຂອງກໍາໄລສຸດທິປະຈໍາປີ
  - ບໍລິສັດຕ້ອງນໍາເງິນໄປລົງທຶນ ເພື່ອຂະຫຍາຍປະລິມານສິນເຊື່ອ
  - ກຽມເງິນບາງສ່ວນໄວ້ໃຊ້ຄືນເງິນກູ້ຢືມທີ່ຮອດກໍານົດຊໍາລະ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດການຈັດສັນກໍາໄລສຸດທິ ປະຈໍາປີ 2022 ແລະ ງົດຈ່າຍເງິນປັນຜົນ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິພິຈາລະນາອະນຸມັດການຈັດສັນກໍາໄລສຸດທິ ປະຈໍາປີ 2022 ແລະ ງົດຈ່າຍເງິນປັນຜົນດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

| | | |
|---|---|---|
| ສໍາຮອງຕາມກົດໝາຍ | 104.765.163 | 10.00 % |
| ສະສົມໄວ້ໃນກໍາໄລສະສົມ | 942.886.468 | 90.00 % |
| ກໍາໄລສຸດທິປະຈໍາປີ 2022 | 1.047.651.631 | 100.00 % |

**ວາລະທີ 5 ພິຈາລະນາອະນຸມັດແຜນການດໍາເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈໍາປີ 2023**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນການດໍາເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈໍາປີ 2023 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອໍານວຍການ ເປັນຜູ້ນໍາສະເໜີກ່ຽວກັບ ພິຈາລະນາອະນຸມັດແຜນການດໍາເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈໍາປີ 2023 ດັ່ງນີ້:

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628, ໜ່ວຍ 19, ບ້ານ ໂພນພະເນົາ, ຖນ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

## ພາບລວມ ແຜນງານປີ 2023

- ເປົ້າກຳໄລສຸດທິຫຼັງພາສີ : 11.329,2 ລ້ານກີບ ກຳໄລສຸທິເພີ່ມຂື້ນ 981.4 ສ່ວນຮ້ອຍທຽບກັບປີ 2021
- ທຸລະກຳຫຼັກ : ເນັ້ນສິ່ນເຊື່ອຜ່ອນຄຳ
- ເປີດສາຂາ ຫຼື ໜ່ວຍບໍລິການ : ບໍ່ມີ
- ສັດສ່ວນສິນເຊື່ອໃໝ່ : ທັງໝົດ 65.242 ລ້ານກີບ
  : ສິ່ນເຊື່ອ ຜ່ອນຄຳ = 49.978 ລ້ານກີບ (77%)
  : ສິ່ນເຊື່ອ ລົດຈັກ = 15.263 ລ້ານກີບ (23%)
- ກູ້ເງີນເພີ່ມ : ບໍ່ມີ
- ຄືນເງີນກູ້ : 21.990 ລ້ານກີບ
- ເງີນກູ້ຄົງເຫຼືອທ້າຍປີ : 9.969 ລ້ານກີບ
- ຈ່າຍປັນຜົນ : ບໍ່ມີການຈ່າຍປັນຜົນ ຈາກຜົນດຳເນີນການປີ 2022
- ບໍ່ມີການຕັ້ງກຳໄລ/ຂາດທຶນອັດຕາແລກປ່ຽນ : ອັດຕາປັດຈຸບັນປະມານ 17.000ກີບ/USD
- ອັດຕາພາສີນິຕິບຸກຄົນ : 20 %

ຕາມແຜນງານປະຈຳປີ 2023 ບໍລິສັດກຳນົດທີ່ຈະດຳເນີນທຸລະກິດບົນພື້ນຖານຂອງກະແສເງິນຮັບໃນປັດຈຸບັນ ໂດຍບໍລິສັດມີແຜນທີ່ຈະຫາແຫ່ງເງີນກູ້ຢືມໃນສະກຸນເງີນກີບເພີ່ມເຕີມ ດັ່ງນັ້ນ ຫາກບໍລິສັດສາມາດເຂົ້າເຖີງແຫ່ງເງີນກູ້ຢືມເພີ່ມເຕີ່ມ ໄດ້ແລ້ວນັ້ນ ບໍລິສັດຈະທົບທວນແຜນການດຳເນີນງານປະຈຳປີໃຫ່ມໃຫ້ສອດຄ່ອງກັບບ້ວງເງີນກູ້ ແລະ ສະຖານະການດ້ານການຕະຫຼາດຕໍ່ໄປ

- **ຄາດການແຜນງານປີ 2023 ທຽບກັບ ປີ 2022**

| ລາຍການ | 2022 | 2023 - P | ຜົນຕ່າງ |
|---|---|---|---|
| ກຳໄລສຸດທິ (ກ່ອນພາສີ) | 3.689,5 | 14.327,3 | +10.637,0 |
| ພາສີນິຕິບຸກຄົນ | 2.641,9 | 2.998,1 | +356,2 |
| ກຳໄລສຸດທິ (ຫຼັງພາສີ) | 1.047,6 | 11.329,2 | +10.281,6 |

- **Financial Highlight as of end of 2023**

| | | |
|---|---|---|
| • Debt to Equity | 0,12 | times |
| • Net Profit Margin | 28,67 | % |
| • Return of Asset | 14,69 | % |
| • Return of Equity | 13,75 | % |
| • Earning Per Share (100 Kip) | 28 | kip/share |
| • Book Value | 206 | kip |
| • Number of Total share | 400.000.000 | shares |

- **Highlight as of end of 2023**

| | | |
|---|---|---|
| • Number of new contract | 4.450 | contracts |
| • New Booking loan amount | 65.242 | mil. Kip |
| • % of Provision for Bad Debt | 4,97 | % |
| • New Loan | - | mil. Kip |
| • Repayment for Loan | 21.900 | mil. kip |
| • Outstanding Loan | 9.969 | mil. kip |

- ແຜນເງິນລົງທຶນ ແລະ ຈັດຊື້ຊັບສິນປະຈໍາປີ 2023

| Type of investment | Kip |
|---|---|
| Office Building and decoration | - |
| Vehicle (Car and Pickup) | - |
| Main Computer Hardware and Peripherals | 150.000.000 |
| Application Software | 300.000.000 |
| PC set | 62.500.000 |
| Office Equipment + replacement | 600.000.000 |
| Investment for new branch (Decoration) | - |
| Others | - |
| Total | 1.112.500.000 |

- **ອັດຕາກຳລັງ ແລະ ເງິນເດືອນຂອງພະນັກງານ ປະຈຳປີ 2023**

- ຈຳນວນພະນັກງານ ເມື່ອສິ້ນປີ 129 ອັດຕາ
  (ເພີ່ມຂຶ້ນ 22 ອັດຕາຈາກອັດຕາກຳລັງສິ້ນປີ 2022)
- ເງິນເດືອນຂອງພະນັກງານລວມທັງປີ 8.657,5 ລ້ານກີບ
- ຄ່າໃຊ້ຈ່າຍກ່ຽວກັບພະນັກງານລວມ 11.502,1 ລ້ານກີບ
- ຄ່າໃຊ້ຈ່າຍກ່ຽວກັບພະນັກງານ ແລະ ຜົນຕອບແທນຂອງອຳນວຍການລວມ 13.162,1 ລ້ານກີບ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດແຜນການດຳເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈຳປີ 2023 ແລະ ມອບສິດໃຫ້ສະພາບໍລິຫານໃນການທົບທວນແຜນງານປະຈຳປີ 2023 ໃຫ່ມ ຕາມທີ່ເໝາະສົມກັບສະຖານະການຕັ້ງຕໍ່ໄປ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດ ແຜນການດຳເນີນການ, ເງິນເດືອນພະນັກງານ ແລະງົບລົງທຶນຂອງບໍລິສັດ ປະຈຳປີ 2023 ແລະ ມອບສິດໃຫ້ສະພາບໍລິຫານໃນການທົບທວນແຜນງານປະຈຳປີ 2023 ໃຫ່ມ ຕາມທີ່ເໝາະສົມກັບສະຖານະການຕັ້ງຕໍ່ໄປ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 6 ພິຈາລະນາອະນຸມັດງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບ ຜູ້ອຳນວຍການ (ສະມາຊິກສະພາບໍລິຫານຂອງບໍລິສັດ)**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດພິຈາລະນາອະນຸມັດ ງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບຜູ້ອຳນວຍການຂອງບໍລິສັດ ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ນຳສະເໜີກ່ຽວກັບງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບຜູ້ອຳນວຍການຂອງບໍລິສັດ ເນື່ອງຈາກຜົນການດຳເນີນການບໍ່ເປັນໄປຕາມແຜນການດຳເນີນການທີ່ກຳນົດໃວ້ ເຊິ່ງມີບົດສະຫຼຸບດັ່ງນີ້:

- ກຳໄລສຸດທິ

| ລາຍການ | ລ້ານກີບ |
|---|---|
| ກຳໄລສຸດທິ ຕາມແຜນງານປະຈຳປີ 2022 | 10.019,8 |
| ກຳໄລສຸດທິ ປະຈຳປີ 2022 | 1.047,6 |

Achieved = 10,5 %

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດ ງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບຜູ້ອຳນວຍການຂອງບໍລິສັດ

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດອະນຸມັດ ງົດຈ່າຍຄ່າຕອບແທນລາຍປີ 2022 ສຳລັບ ຜູ້ອຳນວຍການ (ສະມາຊິກສະພາບໍລິຫານຂອງບໍລິສັດ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 7 ພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບັ້ຍປະຊຸມ ແລະ ເງິນເດືອນ ຂອງຜູ້ອຳນວຍການ (ສະມາຊິກສະພາບໍລິຫານ) ຂອງບໍລິສັດ ປະຈຳປີ 2023**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2023 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ມານົບ ຕຣີລິດວິໄລ, ສະມາຊິກສະພາບໍລິຫານ ແລະ ຜູ້ອຳນວຍການເປັນຜູ້ນຳສະເໜີກ່ຽວກັບ ສະເໜີຂໍອະນຸມັດກຳນົດຜົນຕອບແທນປະຈຳປີ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ສຳລັບປີ 2023 ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

ກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2023

| | ລາຍລະອຽດ | ປະທານ | ກຳມະການ | ຫົວໜ່ວຍ |
|---|---|---|---|---|
| 1. | ຜົນຕອບແທນລາຍເດືອນ | 11.250.000 | 6.250.000 | ກີບ/ເດືອນ/ທ່ານ |
| 2. | ເບ້ຍປະຊຸມ:<br>- ສະພາບໍລິຫານ<br>- ຄະນະກຳມະການຊຸດຍ່ອຍ | <br>2.500.000<br>1.500.000 | <br>1.500.000<br>1.000.000 | <br>ກີບ/ຄັ້ງ/ທ່ານ<br>ກີບ/ຄັ້ງ/ທ່ານ |
| 3. | ຜົນຕອບແທນ (ບຳເນັດ) ປະຈຳປີ | 3 ສ່ວນຮ້ອຍ ຈາກປະລິມານການກຳໄລສຸດທິປະຈຳປີ 2023 (ພິຈາລະນາປັບເພີ່ມ ຫຼື ຫຼຸດລົງຕາມຜົນງານຈິງ) | | |

**ໝາຍເຫດ:** ຜົນຕອບແທນຂ້າງຕົ້ນ ບໍ່ລວມເງິນເດືອນ ແລະ ໂບນັດຂອງຜູ້ອຳນວຍການທີ່ເຮັດໜ້າທີ່ບໍລິຫານງານປະຈຳວັນ ໂດຍເງິນເດືອນ ແລະ ໂບນັດຂອງຜູ້ອຳນວຍການໄດ້ລວມຢູ່ໃນແຜນການດຳເນີນການປະຈຳປີ 2023 ທີ່ຜ່ານການອະນຸມັດແລ້ວ (ວາລະທີ່ 5 )

**ຜົນຕອບແທນຂອງຜູ່ອຳນວຍການໃນ 3 ປີທີ່ຜ່ານມາ ມີດັ່ງນີ້ (ໜ່ວຍກີບ)**

| ປີ | ລາຍເດືອນ | ເບ້ຍປະຊຸມ | ບຳເນັດປະຈຳປີ | ລວມ |
|---|---|---|---|---|
| 2020 | 735.000.000 | 79.875.000 | 210.000.000 | **1.024.875.000** |
| 2021 | 735.000.000 | 70.000.000 | 227.000.000 | **1.032.000.000** |
| 2022 | 735.000.000 | 121.000.000 | - | **856.000.000** |

ຜົນຕອບແທນຂ້າງເທິງ ຍັງບໍ່ໄດ້ລວມກັບເງິນເດືອນຂອງຜູ້ອຳນວຍການ ທີ່ທຳໜ້າທີ່ບໍລິຫານງານປະຈຳວັນ

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

- ບໍ່ມີຜູ້ຖືຮຸ້ນທ່ານໃດສອບຖາມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດກຳນົດຄ່າຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນ ຂອງຜູ້ອຳນວຍການ (ສະມາຊິກ ສະພາບໍລິຫານ) ຂອງບໍລິສັດ ປະຈຳປີ 2023

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**ມະຕິ:** ກອງປະຊຸມມີມະຕິອະນຸມັດ ກຳນົດຜົນຕອບແທນ, ເບ້ຍປະຊຸມ ແລະ ເງິນເດືອນຂອງຜູ້ອຳນວຍການ ປະຈຳປີ 2023 ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 8 ພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2023**

ປະທານກອງປະຊຸມສະເໜີໃຫ້ກອງປະຊຸມພິຈາລະນາແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກ ແລະ ກຳນົດ ຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2023 ໃນວາລະກອງປະຊຸມຄັ້ງນີ້, ກອງປະຊຸມຈະລົງ ຄະແນນສຽງຮັບຮອງເອົາຫລາຍກວ່າເຄິ່ງໜຶ່ງຂອງຈຳນວນສຽງໃນກອງປະຊຸມ.

ປະທານກອງປະຊຸມ ໄດ້ມອບໝາຍໃຫ້ ທ່ານ ວິນຍູ ຈິລະປະພາການ ສະມາຊິກສະພາບໍລິຫານ (ອິດສະຫຼະ) ແລະ ສະມາຊິກຄະນະກຳມະການກວດສອບ ເປັນຜູ້ນຳສະເໜີໂດຍລາຍງານໃຫ້ກອງປະຊຸມຮັບ ຊາບວ່າ ຄ່າຕອບແທນສຳຫຼັບການກວດສອບປະຈຳປີ 2022 ທີ່ບໍລິສັດໄດ້ຮັບອະນຸມັດ ຈາກກອງປະຊຸມຜູ້ຖືຮຸ້ນ ປະຈະປີ 2022 ເປັນຈຳນວນເງິນ 30,000 ໂດລາສະຫະລັດ ໂດຍໃນລະຫວ່າງປີ 2022 ບໍລິສັດໄດ້ເພີ່ມ ງານກວດສອບສຳຫຼັບການກວດສອບໃນກຸ່ມ ເພື່ອໃຫ້ມາດຕະຖານບັນຊີຂອງບໍລິສັດ ແລະ ບໍລິສັດແມ່ ເປັນມາ ຕະຖານດຽວກັນ ສະພາບໍລິຫານຈຶ່ງມີມະຕິອະນຸມັດຜົນຕອບແທນສຳຫຼັບການກວດສອບເພີ່ມເຕີມຈຳນວນ 13,000 ໂດລາສະຫະລັດ

ນອກຈາກນີ້ ທ່ານ ວິນຍູ ຈິລະປະພາການ ລາຍງານໃນກອງປະຊຸມຮັບຊາບວ່າ ຄະນະກຳມະການກວດສອບ ໄດ້ຈັດກອງປະຊຸມຂຶ້ນໃນວັນທີ 17 ກຸມພາ 2023 ແລະ ມະຕິແຕ່ງຕັ້ງ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການ ກວດສອບບັນຊີ ປະຈຳປີ 2023 ເຊິ່ງບົດສະຫຼຸບດັ່ງຕໍ່ໄປນີ້:

- **ເຫດຜົນທີ່ເລືອກ PWC Lao**
  - ເປັນບໍລິສັດທີ່ກວດສອບບັນຊີໃນ ສປປ ລາວ ມາດົນ
  - ເປັນບໍລິສັດທີ່ກວດສອບ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວຫຼາຍບໍລິສັດ
  - ເປັນຜູ້ກວດສອບຂອງບໍລິສັດ ໃນປີ 2022 ທີ່ຜ່ານ ແລະ ມີຄວາມເຂົ້າໃຈໃນລະບົບງານ ແລະ ການເຮັດວຽກຂອງບໍລິສັດເປັນຢ່າງດີ
- **ຄ່າຕອບແທນສຳລັບການກວດສອບບັນຊີ ປະຈຳປີ 2023**

| | MHTL | For Group |
|---|---|---|
| ○ ຄ່າ Review ງົບເຄິ່ງປີ | 10.500 USD | |
| ○ ຄ່າ Audit ງົບປະຈຳປີ | 21.500 USD | |
| **ລວມທັງໝົດ** | **32.000 USD** | **6.000 USD** |

**ໝາຍເຫດ:** ຄ່າຕອບແທນຂ້າງຕົ້ນ ຍັງບໍ່ລວມຄ່າ VAT ແລະ Out of Pocket ເຊິ່ງປະກອບດ້ວຍຄ່າເດີນທາງ, ຄ່າເອກະສານ, ຄ່າແປເອກະສານ ແລະ ອື່ນໆ

- **ຜູ້ກວດສອບບັນຊີພາຍນອກ ແລະ ຄ່າຕອບແທນ ສຳລັບ 3 ປີທີ່ຜ່ານມາ** ດັ່ງນີ້

| ປີ | ຜູ້ກວດສອບ | ຜົນຕອບແທນລວມ | For Group |
|---|---|---|---|
| • 2020 | Deloitte Lao | 32,500 USD | - |
| • 2021 | PWC Lao | 28,700 USD | - |
| • 2022 | PWC Lao | 30,000 USD | 13.000 USD |

ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນສອບຖາມກ່ຽວກັບວາລະດັ່ງກ່າວ:

ທ່ານ ມົນຕຣີ ອາລຸນ ຕາງໜ້າຜູ້ຖືຮຸ້ນ ມີຈຳນວນຮຸ້ນ 59,865,440 ຮຸ້ນ ຂໍສອບຖາມກ່ຽວກັບຄ່າຕອບແທນຈາກການກວດສອບປະຈຳປີ 2022 ທີ່ເພີ່ມຈຳນວນ 13,000 ໂດລາສະຫະລັດນັ້ນ ມີການຕັ້ງຢູ່ໃນແຜນການປະຊຸມງານປະຈປີ ແລ້ວບໍ ?

ທ່ານ ວິນຍູ ຈິລະປະພາການ ຊີ້ແຈ້ງວ່າ ບໍ່ມີໃນການຕັ້ງຢູ່ໃນແຜນງານງານປະຈຳປີ 2022 ເນື່ອງຈາກມີການຮ້ອງຂໍຈາກບໍລິສັດແມ່ ເພື່ອໃຫ້ມາດຕະຖານບັນຊີກົງກັນ ຈຶ່ງມີການກວດສອບລາຍລະອຽດເພີ່ມ ດັ່ງນັ້ນບໍລິສັດຈຶ່ງຕ້ອງມີຄ່າໃຊ້ຈ່າຍເພີ່ມເຕີມ

ເມື່ອບໍ່ມີທ່ານໃດສອບຖາມແລ້ວປະທານຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາອະນຸມັດຄ່າຕອບແທນສຳຫຼັບການກວດສອບປະຈຳປີ 2022 ເພີ່ມເຕີມຈຳນວນ 13,000 ໂດລາສະຫະລັດ ແລະ ອະນຸມັດແຕ່ງຕັ້ງ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2023

ຫຼັງຈາກທີ່ໄດ້ພິຈາລະນາ ແລະ ຮັບຮອງເລື່ອງດັ່ງກ່າວ ກອງປະຊຸມໄດ້ລົງຄະແນນສຽງ ດັ່ງນີ້:

- ເຫັນດີ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ບໍ່ເຫັນດີ 0 ສຽງ ຄິດເປັນ 0.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ
- ລວມ 333.916.600 ສຽງ ຄິດເປັນ 100.00 % ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມປະຊຸມ

**<u>ມະຕິ:</u>** ກອງປະຊຸມມີມະຕິອະນຸມັດອະນຸມັດຄ່າຕອບແທນານກວດສອບປະຈຳປີ 2022 ເພີ່ມເຕີມຈຳນວນ 13,000 ໂດລາສະຫະລັດ ແລະ ແຕ່ງຕັ້ງ ບໍລິສັດ PriceWaterhouseCoopers (Lao) sole Company Limited ເປັນຜູ້ກວດສອບບັນຊີພາຍນອກ ແລະ ກຳນົດຄ່າຕອບແທນ ສຳລັບການກວດສອບບັນຊີ ປະຈຳປີ 2023 ກຳນົດຄ່າຕອບ

**ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ**
628, ໜ່ວຍ 19, ບ້ານ ໂພນພະເນົາ, ກມ. 5, ຖະໜົນ ໄກສອນພົມວິຫານ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ.
ໂທ-ແຟັກ: +856 21 418 062-6

ແທນສໍາລັບການກວດສອບບັນຊີ ຈໍານວນ 38.000 ໂດລາສະຫະລັດ (ເປັນຄ່າຕອບແທນຈາກການກວດສອບ ບໍລິສັດ ຈໍານວນ 32,000 ໂດລາສະຫະລັດ ແລະ ຄ່າຕອບແທນສໍາຫຼັບການກວດສອບກຸ່ມ ບໍລິສັດ ຈໍານວນ 6,000 ໂດລາສະຫະລັດ) ຄ່າຕອບແທນຍັງບໍ່ລວມຄ່າ VAT ແລະ Out of Pocket ເຊິ່ງປະກອບດ້ວຍຄ່າເດີນທາງ, ຄ່າເອກະສານ, ຄ່າແປເອກະສານ ແລະ ອື່ນໆ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມປະຊຸມ

**ວາລະທີ 09 ເລື່ອງອື່ນໆ (ຖ້າມີ)**

ບໍ່ມີທ່ານໃດສະເໜີ ຫຼື ສອບຖາມເລື່ອງໃດໆເພີ່ມເຕີມ

ບໍ່ມີເລື່ອງອື່ນໆທີ່ຕ້ອງໃຫ້ກອງປະຊຸມຮັບຊາບ ແລະ ພິຈາລະນາ ທ່ານປະທານກອງປະຊຸມຈຶ່ງສະເໜີໃຫ້ປິດກອງປະຊຸມໃນເວລາ 11:23 ໂມງ

| | |
|---|---|
| **ຜູ້ອໍານວຍການ** | **ປະທານກອງປະຊຸມ** |
| (ທ່ານ ມານິບ ຕຣີລິດວິໄລ) | (ທ່ານ ທີຣະ ຊຸຕິວະລາພອນ) |